ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: 2402 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ: 01 ທັນວາ 2015

# ແຈ້ງການ

ເຖິງ : ບັນດາທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ.

ເລື່ອງ: ໃຫ້ເອົາໃຈໃສ່ຊີ້ນຳໃນການຕິດຕາມ, ກວດກາ, ຄຸ້ມຄອງ, ແກ້ໄຂ ກ່ຽວກັບ ສະພາບການປັ່ນປ່ວນ, ກັກຕຸນ ແລະ ສວຍໂອກາດຂຶ້ນລາຄາສິນຄ້າໃນໄລຍະເທດສະການງານບຸນປະເພນີຕ່າງໆ.

- ອີງຕາມດຳລັດ 474/ນຍ, ລົງວັນທີ 18 ພະຈິກ 2011, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມບົດແນະນຳ ສະບັບເລກທີ 1405/ອຄ.ຄພນ, ລົງວັນທີ 11 ກໍລະກົດ 2012 ກ່ຽວກັບການຈັດຕັ້ງປະຕິບັດດຳລັດ ເລກທີ 474/ນຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມສະພາບການເໜັງຕີງຂອງລາຄາສິນຄ້າສະບຽງອາຫານ ປະເພດ ຊີ້ນງົວ, ຄວາຍ, ໝູ, ປາ ແລະ ພືດຜັກຕ່າງໆ ໃນໄລຍະເທດສະການງານບຸນປະເພນີຕ່າງໆ.

ເພື່ອຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ຜູ້ບໍລິໂພກໄດ້ຮັບຄວາມເປັນທຳທາງດ້ານລາຄາ, ປະລິມານ ແລະ ຄຸນນະພາບ, ທັງເປັນການປະຕິບັດພາລະບົດບາດຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ໃນການຄຸ້ມຄອງລາຄາສິນຄ້າ, ໂດຍສະເພາະແມ່ນ ສິນຄ້າທີ່ມີຄວາມຈຳເປັນ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນແມ່ນ ສິນຄ້າປະເພດສະບຽງອາຫານ ຊີ້ນ, ປາ ແລະ ພືດຜັກຕ່າງໆ, ຫລີກເວັ້ນການສວຍໂອກາດ ກັກຕຸນສິນຄ້າເພື່ອເອົາກຳໄລຂອງພໍ່ຄ້າມືກາງ, ຮັບປະກັນການສະໜອງໃຫ້ພຽງພໍກັບຄວາມຕ້ອງການ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ :

1. ໃຫ້ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ ແລະ ນະຄອນຫຼວງ ຈັດຕັ້ງປະຕິບັດການຄຸ້ມຄອງລາຄາສິນຄ້າ ທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ ແລະ ຕໍ່ສັງຄົມ ຢູ່ພາຍໃນແຂວງຂອງຕົນ ບົນພື້ນຖານ ຄວາມເປັນເອກະພາບ ແລະ ການຮ່ວມມືກັນ ເພື່ອຮັບປະກັນການສະໜອງໃຫ້ພຽງພໍກັບຄວາມຕ້ອງການ, ຫຼີກເວັ້ນ ການສວຍໂອກາດ ກັກຕຸນສິນຄ້າ ຂຶ້ນລາຄາ ເພື່ອເອົາກຳໄລ;

2. ຄຸ້ມຄອງລາຄາສິນຄ້າສະບຽງອາຫານປະເພດຊີ້ນ (ໝູ, ງົວ, ຄວາຍ, ໄກ່, ປາ) ແລະ ພືດຜັກຕ່າງໆ ຢູ່ພາຍໃນ ແຂວງຂອງຕົນໃຫ້ເປັນໄປຕາມກົນໄກຕະຫຼາດໃນແຕ່ລະໄລຍະ ບົນພື້ນຖານ ດຳລັດ 474/ນຍ ແລະ ລະບຽບການ ກ່ຽວຂ້ອງ, ແລະ ໃຫ້ຄິດໄລ່ໂຄງປະກອບລາຄາໃນແຕ່ລະຂອດ ຢ່າງຈະແຈ້ງ (ຂອດຕົ້ນທຶນການຜະລິດ, ຂາຍຍົກ ແລະ ຂາຍຍ່ອຍ).

- ສະເພາະສິນຄ້າປະເພດຊີ້ນ ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງຂອດນາຍຮ້ອຍ (ຂາຍຍົກ) ແລະ ຂອດລູກຊຽງ (ຂາຍຍ່ອຍ);

- ສ່ວນປະເພດພືດຜັກ ແລະ ສະບຽງອາຫານຕ່າງໆ ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມ ຂອດເກັບຊື້ຈາກຊາວກະສິກອນ ແລະ ຂອດຂາຍຍ່ອຍ ຫລີກເວັ້ນປັດໃຈສວຍໂອກາດ;

3. ເປັນເຈົ້າການໃນການຕິດຕາມ, ກວດກາ, ຄຸ້ມຄອງ ຢ່າງເປັນປະຈຳ ໃນທ້ອງຕະຫຼາດຫຼັກໆ ພາຍໃນທ້ອງຖິ່ນຂອງຕົນດ້ວຍການແຕ່ງຕັ້ງພະນັກງານໝູນວຽນກັນລົງໄປສົມທົບກັບຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ແລະ ຄະນະຄຸ້ມຄອງຈັດສັນຕະຫຼາດ ເພື່ອພ້ອມກັນຈັດຕັ້ງປະຕິບັດ.

4. ເປັນເຈົ້າການໃນການເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການໄດ້ເຂົ້າໃຈຕໍ່ແນວທາງນະໂຍບາຍກໍຄືລະບຽບການທີ່ລັດວາງອອກໃນແຕ່ລະໄລຍະ ໂດຍສະເພາະແມ່ນການຕິດລາຄາສິນຄ້າເປັນເງິນກີບ ເພື່ອຄວາມສະດວກ ແລະ ທັງເປັນການຊຸກຍູ້ໃຫ້ບັນດາຜູ້ປະກອບການ ສະໜອງສິນຄ້າປະເພດສະບຽງອາຫານທີ່ຈຳເປັນດັ່ງກ່າວ ໃຫ້ພຽງພໍກັບຄວາມຕ້ອງການໃນໄລຍະເທດສະການງານບຸນຕ່າງໆ.

5. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງລາຄາສິນຄ້າ ທີ່ເກີດຂຶ້ນ ຢູ່ພາຍໃນແຂວງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ.

6. ລາຍງານຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ, ປັບປຸງ ບັນດາລະບຽບການໃຫ້ແທດເໝາະກັບສະພາບການປ່ຽນແປງທາງດ້ານເສດຖະກິດໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

<u>ສຳເນົາສົ່ງ:</u>

1. ຫລບ "ເພື່ອລາຍງານ"
2. ຄະນະນຳກະຊວງ 05 ທ່ານ "ເພື່ອລາຍງານ"
3. ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ "ເພື່ອຊາບ"